ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ
ກົມອາຫານ ແລະ ຢາ
ໂທ: 214 013-14
ແຟັກ: 213 495

ເລກທີ 5513 /ກອຢ
ນະຄອນຫຼວງວຽງຈັນ, ວັນທີ 02 JUL 2018

# ໜັງສືແຈ້ງການ

ຮຽນ: ທ່ານ ຫົວໜ້າພະແນກສາທາລະນະສຸກແຂວງ, ນະຄອນຫຼວງ, ຫົວໜ້າກອງກວດກາອາຫານ ແລະ ຢາ, ບໍລິສັດ, ຫ້າງຮ້ານ ແລະ ພໍ່ແມ່ປະຊາຊົນໃນທົ່ວປະເທດ

ເລື່ອງ: ຫ້າມບໍລິໂພກ ແລະ ຈຳໜ່າຍ ຜະລິດຕະພັນອາຫານເສີມ Lyn FS-Three ແລະ Lyn Block Burn Break Build

- ອີງຕາມ ກົດໝາຍວ່າດ້ວຍອາຫານ, ເລກທີ 33/ສພຊ, ລົງວັນທີ 24/07/2013;
- ອີງຕາມ ປະກາດສຳນັກງານຄະນະກຳມະການອາຫານ ແລະ ຢາ, ເລື່ອງປະກາດຜົນກວດພິສູດອາຫານ ສະບັບເລກທີ 11, ລົງວັນທີ 25 ເມສາ 2018.

ກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ຜະລິດຕະພັນອາຫານເສີມຫຼຸດນ້ຳໜັກ Lyn FS-Three ມີລັກສະນະແຄບຊູນສີຂຽວໃນແຜງອາລູມີນຽມປຼາສຕິກ ບັນຈຸໃນກ່ອງເຈັ້ຍ ຜົນການກວດວິເຄາະຜະລິດຕະພັນດັ່ງກ່າວ ພົບສານບີຊາໂຄດິວ (Bisacodyl) ແລະ Lyn Block Burn Break Build ມີລັກສະນະແຄບຊູນສີຂາວໃນແຜງອລູມີນຽມປຼາສຕິກ ບັນຈຸໃນກ່ອງເຈັ້ຍ ຜົນການກວດວິເຄາະຜະລິດຕະພັນດັ່ງກ່າວ ພົບສານໄຊບຸຕຣາມີນ (Sibutatramine) ຊຶ່ງເປັນສານທີ່ຫ້າມໃສ່ໃນອາຫານ, ຜະລິດໂດຍ ບໍລິສັດຟູດຊາຍຊັບພາຍເຊີວິດ, ຈັງຫວັດປະທຸມທານີ ປະເທດໄທ; ທັງ 2 ລາຍການດັ່ງກ່າວເຮັດໃຫ້ເປັນອັນຕະລາຍຕໍ່ສຸຂະພາບ.

ສະນັ້ນ, ກົມອາຫານ ແລະ ຢາ ຈຶ່ງແຈ້ງມາຍັງທ່ານ ຫ້າມບໍລິໂພກ, ຈຳໜ່າຍ ຜະລິດຕະພັນດັ່ງກ່າວ; ຖ້າຫາກເຈົ້າໜ້າທີ່ອາຫານ ແລະ ຢາ ພົບເຫັນແມ່ນ ຈະໄດ້ຢຶດອາຍັດ ແລະ ຖືກປະຕິບັດມາດຕະການ ຕາມກົດໝາຍວ່າດ້ວຍອາຫານ ສະບັບເລກທີ 33/ສພຊ, ລົງວັນທີ 24/07/2013.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຮັບຊາບ ແລະ ໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດດ້ວຍ.

ຫົວໜ້າກົມ

ດຣ.ສົມທະວີ ຈາງວິລົມມິດ